Annex 3

**ສະມາຄົມການເງິນຈຸລະພາກ**
ໜ່ວຍ 14 ບ້ານ ອາມອນ, ຮ່ອມ 23 (23\3) ເມືອງ ໄຊເສດຖາ; ຕູ້ ປ.ນ 4030, ນະຄອນຫລວງວຽງຈັນ, ສ ປ ປ ລາວ
Email: mfa@laomfa.org; Web: www.laomfa.org. ໂທ: 030 9481 265. ແຟັກ: +856 21 226 019
---------------------------------------------------------------------------------------------------------------

# ການບໍລິການ ແລະ ກິດຈະກໍາ ຂອງ ສມກຈ ໃຫ້ແກ່ສະມາຊິກ

**ສະມາຊິກໄດ້ຮັບສິດພິເສດ*ໃນການບໍລິການຕ່າງໆ ດັ່ງລຸ່ມນີ້:**

- ສມກຈ ໃຫ້ບໍລິການ ແລະ ການຝຶກອົບຮົມໃນ ຫຼັກສູດ ການບໍລິຫານການເງິນຈຸລະພາກ (MFMCC), ຫົວຂໍ້ ການບໍລິຫານ ບຸກຄະລາກອນ ແລະ ບໍລິຫານ/ ການຄຸ້ມຄອງຫ້ອງການ, ການຊອກຫາແຫຼ່ງທຶນ, ພາວະຜູ້ນໍາ, ການວາງແຜນທຸລະກິດໃຫ້ຜູ້ປະກອບການທຸລະກິດຄອບຄົວ ແລະ ປະຊາສຶກສາດ້ານການເງິນ.
- ສມກຈ ຕິດຕາມຜົນການດໍາເນີນງານຂອງ ສະຖາບັນທີ່ເປັນສະມາຊິກ, ສະຫຼຸບ ແລະ ສົ່ງລາຍງານ ຕໍ່ຕະຫຼາດ MIX
- ໃຫ້ການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການຄົ້ນຄ້ວາຕ່າງໆ, ແລະປະສົບການທີ່ດີທີ່ກ່ຽວຂ້ອງສໍາລັບຂະແໜງການໃນ (MFA ເວັບໄຊສ໌, ຈົດໝາຍຂ່າວ, ການບໍລິການ Email, ກອງປະຊຸມສະມາຊິກ).
- ຈັດຕັ້ງກອງປະຊຸມ ວິຊາການ ສະມາຊິກ ເພື່ອ ປະກອບຄໍາຄິດເຫັນກ່ຽວກັບນະໂຍບາຍ, ລະບຽບການ, ຂໍ້ແນະນໍາ, ແລະ ອື່ນໆ ທີ່ອອກໂດຍຜູ້ຄຸ້ມຄອງຂະແໜງການເງິນຈຸລະພາກ ແລະ ການບໍລິຫານ ສກຈ/ສສງ.
- ໃຫ້ຂໍ້ມູນຂ່າວສານ ແລະ ແນະນໍາການລົງທຶນ ທາງສັງຄົມ ແລະ ເອື້ອອໍານວຍ ການເຊື່ອມໂຍງລະຫວ່າງນັກລົງທຶນກັບບັນດາສະມາຊິກ
- ດໍາເນີນການກວດສອບທາງດ້ານສັງຄົມສໍາລັບການເງິນ (ເຄື່ອງມື CERISE SPI) ຫຼັກການປົກປ້ອງລູກຄ້າ ຂອງ SMART CAMPAIGN
- ຈັດຝຶກອົບຮົມການວາງແຜນທຸລະກິດໃຫ້ແກ່ຜູ້ປະກອບການທຸລະກິດຄອບຄົວ ແລະ ປະຊາສຶກສາດ້ານ ການເງິນ ສໍາລັບລູກຄ້າຂອງ ສກຈ ທີ່ເປັນ ສະມາຊິກ.
- ມີລະບົບຕິດຕາມການກວດກາການປະຕິບັດງານ - ການເກັບກໍາຂໍ້ມູນ - ວິເຄາະ ແລະ ແຈກຢາຍຂໍ້ມູນການປະຕິບັດທາງດ້ານການເງິນຈາກສະມາຊິກ ສກຈ.
- ສມກຈ ເປັນຂົວຕໍ່ ລະຫວ່າງ ຜູ້ໃຫ້ທຶນ, ນັກລົງທຶນ, ບຸກຄົນທົ່ວໄປທີ່ສົນໃຈ ໃຫ້ຮູ້ຈັກກັບບັນດາສະມາຊິກ.
- ປະສານງານ ກັບ ທຫລ ເພື່ອ ປະກອບຄໍາຄິດເຫັນຈາກສະມາຊິກເຂົ້າໃນລະບຽບ, ຂໍ້ກໍານົດ ແລະ ເອກະສານຕ່າງໆທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ (ທຫລ) ຫຼື ອົງກອນລັດອື່ນໆ ຕາມການສະເໜີຂອງສະມາຊິກ ສກຈ

**ການບໍລິການດ້ານອື່ນໆ:**

- ຊ່ວຍຂຽນ ປຶ້ມຄູ່ມື ການຄຸ້ມຄອງ ບຸກຄະລາກອນ ແລະ ບໍລິຫານ/ ການຄຸ້ມຄອງ (ເຊິ່ງສະມາຊິກຈະໄດ້ປະກອບສ່ວນໃນຄ່າໃຊ້ຈ່າຍສ່ວນໜຶ່ງ)
- ຊ່ວຍຂຽນຄູ່ມືອື່ນໆ (ຕົວຢ່າງ: ຄູ່ມື ກວດສອບພາຍໃນ, ການເງິນ ການບັນຊີ, ການບໍລິຫານສິນເຊື່ອ etc..)
- ແນະນໍາເລື່ອງ ຕ່າງທາງໂທລະສັບ ຫຼື ອື່ນໆ.

*** ຮັບສິດທິພິເສດ ເຊັ່ນຕົວຢ່າງ:**

- ສ່ວນຫຼຸດໃນການເຂົ້າຝຶກອົບຮົມ
- ສິດໃນການ ໄດ້ຮັບທຶນຊ່ວຍເຫຼືອ ເປັນເງິນສົດ ແລະ ເປັນວິຊາການ ໃນໂຄງການ ທົດລອງ ຂອງ ສມກຈ
- ສິດໄດ້ຮັບລາງວັນ ຈາກເປັນສະມາຊິກດີເດັ່ນ ປະຈໍາປີ ຂອງ ສມກຈ
- ສິດໄດ້ຮັບທຶນຊ່ວຍເຫຼືອໃນການກວດສອບທາງດ້ານສັງຄົມ (SPI) ແລະ ຢັ້ງຢືນການປົກປ້ອງສິດຂອງລູກຄ້າ (SMART CAMPAIGN)
- ສະມາຊິກ ທີ່ຍັງອ່ອນນ້ອຍ ສາມາດ ເຮັດໜັງສື ສະເໜີ ເພື່ອຂໍຄວາມຊ່ວຍເຫຼືອທາງດ້ານວິຊາການ ໂດຍການລົງໄປຢ້ຽມຢາມ ແລະ ຝຶກສອນຕົວຈິງ (Coaching) ໃຫ້ ຕາມທີ່ສະມາຊິກຕ້ອງການ - ວຽກງານນີ້ ແມ່ນ ຮ່ວມມືກັບ ທຫລ;